## 7. ບັນດາສິ່ງທີ່ຄວນເອົາໃຈໃສ່ໃນເມື່ອຂໍຢັ້ງຢືນໃບແຈ້ງເສຍຊີວິດຂອງລາວ

1. ໃບແຈ້ງເສຍຊີວິດຂອງລາວເປັນພາສາລາວ ແລະ ສະບັບແປຕົ້ນສະບັບ 1 ສະບັບ ແລະ ສະບັບອັດສຳເນົາ 1 ສະບັບ (ລະຫວ່າງສະບັບເປັນພາສາລາວ ແລະ ສະບັບແປ ຕ້ອງໄດ້ປະທັບກາໃສ່ເຈ້ຍສອງໃບຕໍ່ກັນຈາກອົງການທີ່ກ່ຽວຂ້ອງຢູ່ລາວ), ກ່ອນທີ່ເອົາມາຫາໃຫ້ຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມເຮັດລະບຽບການຢັ້ງຢືນນັ້ນ ຕ້ອງຂໍຢັ້ງຢືນຂອງກະຊວງການຕ່າງປະເທດລາວ ແລະ  ສະຖານທູດລາວປະຈຳຫວຽດນາມກ່ອນ.
2. ພີ່ນ້ອງຂໍຢັ້ງຢືນໃຫ້ ຕ້ອງສະເໜີໜັງສືຢືນຢັນສາຍພົວພັນຕົ້ນສະບັບ 1 ສະບັບ ແລະ ສະບັບອັດສຳເນົາ 1 ສະບັບ (ຕົວຢ່າງ: ສຳ ມະໂນຄົວ, ບໍ່ຈຳເປັນຕ້ອງຢັ້ງຢືນ). ຖ້າມອບສິດໃຫ້ຜູ້ອື່ນເຮັດໃຫ້, ສະເໜີສະໜອງໃບມອບສິດທີ່ໄດ້ຢັ້ງຢືນຖືກຕ້ອງຕາມ ຄວາມເປັນຈິງຂອງກະຊວງການຕ່າງປະເທດລາວ ແລະ ສະຖານທູດລາວປະຈຳຫວຽດນາມ ຫຼື ໄດ້ຢັ້ງຢືນຖືກຕ້ອງຕາມຄວາມເປັນຈິງຂອງພະນັກງານທະບຽນສານ ໃຕ້ຫວັນ ແລະ ໄດ້ສຳຫຼວດໂດຍກົມກົງສູນ-ກະຊວງການຕ່າງປະເທດໃຕ້ຫວັນ, ພ້ອມກັບໜັງສືຢືນຢັນຖານະຂອງຜູ້ເຮັດແທນຕົ້ນສະບັບ 1 ສະບັບ, ສະບັບອັດສຳເນົາ 1 ສະບັບ ແລະ ໜັງສືຢືນຢັນຖານະຂອງຜູ້ມອບສິດສະບັບອັດສຳເນົາ 1 ສະບັບ.
3. ໜັງສືຜ່ານແດນ ຫຼື ບັດປະຈຳຕົວຂອງຜູ້ເສຍຊີວິດສະບັບອັດສຳເນົາ 1 ສະບັບ.
4. ຕື່ມຂໍ້ມູນເຂົ້າໃນແຕ່ລະຂໍ້ໃຫ້ຖືກຕ້ອງ ແລະ ລົງລາຍເຊັນຢູ່ໃນໃບຄຳຮ້ອງຂໍຢັ້ງຢືນໜັງສື (ປະກອບມີເບີໂທລະສັບຢູ່ລາວ ເພື່ອສະດວກໃຫ້ແກ່ການແຈ້ງປະກອບເອກະ ສານຕື່ມ).
5. ຄ່າທຳນຽມ: ໜັງສືເຮັດທຳມະດາມີຄ່າທຳນຽມແມ່ນ 15 ໂດລາສະຫະລັດ/ສະບັບໜຶ່ງ ແລະ

ເວລາຮັບສຳນວນເອກະສານແກ້ໄຂແມ່ນ 04 ວັນລັດຖະການ (ຕົວຢ່າງ: ຮັບ ເອົາສຳນວນເອກະສານໃນວັນຈັນ, ຕອນແລງວັນສຸກຈະສົ່ງສຳນວນເອກະສານຄືນ); ໜັງສືເຮັດດ່ວນມີຄ່າທຳນຽມແມ່ນ 22.5 ໂດລາສະຫະລັດ/ສະບັບໜຶ່ງ ແລະ ເວລາ ຮັບສຳນວນເອກະສານແກ້ໄຂແມ່ນ 02 ວັນລັດຖະການ. ຖ້າຕ້ອງການຢັ້ງຢືນສະບັບ ອັດສຳເນົາຕື່ມອີກ, ແຕ່ລະສະບັບອັດສຳເນົານັ້ນຈະມີຄ່າທຳນຽມເທົ່າກັບ 50% ຂອງ ຕົ້ນສະບັບ (ໃນກໍລະນີເງິນບໍ່ຮອດ 1 ໂດລາສະຫະລັດ, ໃຫ້ຈ່າຍເປັນເງິນຫວຽດນາມ ທີ່ມີຄຸນຄ່າທຽບເທົ່າ). ຖ້າຜູ້ຢັ້ງຢືນໜັງສືຂໍລົບລ້າງການຢັ້ງຢືນ ຫຼື ການຢັ້ງຢືນບໍ່ສາມາດປະຕິບັດໄດ້ຍ້ອນມີຄວາມຜິດພາດຂອງຜູ້ຂໍຢັ້ງຢືນເອງ, ຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມຈະບໍ່ສົ່ງຄືນຄ່າທຳນຽມທີ່ໄດ້ເກັບ ມາແລ້ວ.

6. ເວລາເຮັດວຽກ: ແຕ່ວັນຈັນ ເຖິງ ວັນສຸກ (ຍົກເວັ້ນວັນບຸນ, ປີໃໝ່, ກຸດທີ່ໄດ້ພັກຕາມ ກຳນົດ)

   ຮັບແກ້ໄຂເອກະສານ: ແຕ່ 8:30 ເຖິງ 12:00

   ສົ່ງຜົນແກ້ເອກະສານ: ແຕ່ 14:00 ເຖິງ 16:00 (ໃນກໍລະນີເກີດມີບັນຫາຕິດຄັດເຄື່ອງຈັກຄອມພິວເຕີ ຫຼື ເຄືອຂ່າຍອິນເຕີເນັດອາດຈະເລີກການຊ້າກວ່າ).

7. ທີ່ຢູ່: ຫ້ອງການເສດຖະກິດ ແລະ ວັດທະນະທຳໃຕ້ຫວັນປະຈຳຫວຽດນາມ

   ຊັ້ນ 5, ຕຶກ HITC, ເລກທີ 239 ຖະໜົນຊວັນທຸຍ, ເມືອງເກົ່າເຢີຍ, ນະຄອນຫຼວງຮ່າໂນ້ຍ

   ເບີໂທ: 84-24-38335502~04 (ຕໍ່) 130

   ແຟັກ: 84-24-38336621

ວັນທີ update: 14/12/2017